**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ: /ລບ

ນະຄອນຫຼວງວຽງຈັນ, ວັນທີ:

# (ຮ່າງ)
# ດຳລັດ
# ວ່າດ້ວຍກອງທຶນປ້ອງກັນຄວາມປອດໄພທາງລົດໄຟ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການລົດໄຟ ສະບັບເລກທີ 62/ສພຊ, ລົງວັນທີ 17 ທັນວາ 2018;
- ອີງຕາມ ໜັງສືສະເໜີ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ **...../ຍທຂ**, ລົງວັນທີ**.....**

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການ ຄຸ້ມຄອງ, ນຳໃຊ້ ແລະ ຕິດຕາມ ກວດກາ ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ ເພື່ອລະດົມ, ຂົນຂວາຍ ແລະ ສະສົມ ທຶນ ແນໃສ່ໃຫ້ມີທຶນພຽງພໍ ແລະ ຍືນຍົງ ເພື່ອນຳໃຊ້ເຂົ້າໃນວຽກງານ ປ້ອງກັນຄວາມປອດໄພ ຕາມ ຂະບວນ, ສະຖານີ ແລະ ແລວທາງ ລົດໄຟ ໃຫ້ມີປະສິດທິຜົນ.

**ມາດຕາ 2 ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ**

ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ ຂຽນຫຍໍ້ວ່າ: “ກປຟ” ແມ່ນກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນ ເພື່ອສະສົມທຶນຈາກພາຍໃນ ແລະ ຕ່າງປະເທດ ນຳໃຊ້ເຂົ້າໃນວຽກງານ ປ້ອງກັນ ແລະ ຮັກສາຄວາມປອດໄພ ຕາມ ຂະບວນ, ສະຖານີ ແລະ ແລວທາງ ລົດໄຟ ຂອງ ຕຳຫຼວດລົດໄຟ, ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ແລະ ກຳລັງປ້ອງກັນຊາດ ໃຫ້ມີຄວາມສະດວກ, ປອດໄພ ແລະ ໂລ່ງລ່ຽນ.

**ມາດຕາ 3 ຫຼັກການ ຄຸ້ມຄອງ ແລະ ນຳໃຊ້ ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ**

ການ ຄຸ້ມຄອງ ແລະ ນຳໃຊ້ ກປຟ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຄຸ້ມຄອງ ກປຟ ໃຫ້ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ, ໂປ່ງໃສ, ສາມາດກວດສອບໄດ້ ແລະ ຮັບປະກັນລາຍຈ່າຍ ຕາມແຜນການປະຈຳປີ;
2. ນຳໃຊ້ກອງທຶນ ໃຫ້ຖືກຕາມເປົ້າໝາຍ, ປະຢັດ, ມີປະສິດທິຜົນ ແລະ ມີຄວາມຍືນຍົງ;

3. ເຄື່ອນໄຫວລາຍຮັບ-ລາຍຈ່າຍ ຜ່ານລະບົບບັນຊີເງິນຝາກທະນາຄານ ບົນພື້ນຖານແຜນລາຍຈ່າຍທີ່ໄດ້ຮັບອະນຸມັດຈ່າຍ ຈາກ ກະຊວງການເງິນ ຕາມການມອບຕົວເລກລາຍຮັບເຂົ້າງົບປະມານແຫ່ງລັດໃນແຕ່ລະປີ. ສຳລັບຍອດເຫຼືອບັນຊີເງິນຝາກ ແມ່ນສະສົມເປັນລາຍຮັບ ເພື່ອນຳໃຊ້ໃນປີຕໍ່ໄປ;

4. ກວດກາ ແລະ ກວດສອບ ເປັນປົກກະຕິຕາມ ກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນຳໃຊ້ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ

### ມາດຕາ 4 ແຫຼ່ງລາຍຮັບ

ແຫຼ່ງລາຍຮັບເຂົ້າໃນ ກປຟ ປະກອບດ້ວຍ:

1. ຄ່າບໍລິການຂົນສົ່ງສິນຄ້າທາງລົດໄຟ;
2. ຄ່າປັບໃໝຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລົດໄຟ;
3. ການປະກອບສ່ວນ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງ ລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
4. ດອກເບ້ຍເງິນຝາກທະນາຄານຈາກບັນຊີລາຍຮັບ ກປຟ;
5. ລາຍຮັບອື່ນທີ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ.

ສ່ວນຄ່າບໍລິການຂົນສົ່ງສິນຄ້າທາງລົດໄຟ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 5 ການນຳໃຊ້ ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ

ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ຫ້ອງການຢູ່ແຕ່ລະສະຖານີ, ຄ້າຍ, ປ້ອມຍາມ, ທາງເຂົ້າຄ້າຍ, ທາງລາດຕະເວນ ແລະ ສິ່ງອຳນວຍຄວາມສະດວກອື່ນ ທີ່ຮັບໃຊ້ໃຫ້ແກ່ວຽກງານປ້ອງກັນຄວາມປອດໄພທາງລົດໄຟ;
2. ຕິດຕາມ ກວດກາ ແລະ ແກ້ໄຂ ວຽກງານປ້ອງກັນຄວາມປອດໄພທາງລົດໄຟ;
3. ຕິດຕາມ ກວດກາ ການແລ່ນລົດໄຟ ໃຫ້ສອດຄ່ອງກັບມາດຕະຖານເຕັກນິກ, ປຶ້ມຄູ່ມື ແລະ ລະບຽບການ ກ່ຽວກັບການແລ່ນລົດໄຟ;
4. ສະໜອງ ຍານພາຫະນະ, ເຄື່ອງມື ແລະ ວັດຖຸປະກອນ ເຂົ້າໃນການປ້ອງກັນຄວາມປອດໄພທາງລົດໄຟ;
5. ໂຄສະນາເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບການປ້ອງກັນຄວາມປອດໄພທາງລົດໄຟ;
6. ຈັດ ກອງປະຊຸມ, ຝຶກອົບຮົມ ກ່ຽວກັບວຽກງານປ້ອງກັນຄວາມປອດໄພທາງລົດໄຟ;
7. ໃຊ້ຈ່າຍຄ່າສະມາຊິກຂອງ ອົງການຈັດຕັ້ງລົດໄຟສາກົນ;
8. ໃຊ້ຈ່າຍເຂົ້າໃນວຽກງານບໍລິຫານ ຕາມແຜນລາຍຈ່າຍໃນແຕ່ລະປີ.

## ໝວດທີ 3
## ການຄຸ້ມຄອງ ບໍລິຫານ ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ

### ມາດຕາ 6 ໂຄງປະກອບການຈັດຕັ້ງ ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ

ໂຄງປະກອບການຈັດຕັ້ງຂອງ ກປຟ ປະກອບດ້ວຍ:

1. ສະພາບໍລິຫານ;
2. ກອງເລຂາ.

**ມາດຕາ 7 ສະພາບໍລິຫານ ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ**

ສະພາບໍລິຫານ ກປຟ ຖືກແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ຊຶ່ງມີພາລະບົດບາດ ຊີ້ນໍາ, ຄຸ້ມຄອງການນໍາໃຊ້ ກປຟ ໃຫ້ຖືກຕ້ອງ ຕາມເປົ້າໝາຍ, ມີປະສິດທິພາບ ແລະ ມີປະສິດທິຜົນ.

ສະພາບໍລິຫານ ກປຟ ມີວາລະບໍລິຫານ ກອງທຶນ ຫ້າ ປີ.

**ມາດຕາ 8 ໂຄງປະກອບບຸກຄະລະກອນສະພາບໍລິຫານ ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ**

ສະພາບໍລິຫານ ກປຟ ປະກອບມີ ດັ່ງນີ້:

1. ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນປະທານ;
2. ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ;
3. ຮອງລັດຖະມົນຕີ ກະຊວງການເງິນ ເປັນຮອງປະທານ;
4. ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ ເປັນຮອງປະທານ;
5. ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຮອງປະທານ;
6. ຫົວໜ້າກົມທາງລົດໄຟ, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ
7. ຫົວໜ້າກົມຕໍາຫຼວດລົດໄຟ, ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
8. ຫົວໜ້າກົມສູ້ຮົບ, ກົມໃຫຍ່ເສນາທິການກອງທັບ ເປັນຄະນະ;
9. ຫົວໜ້າກົມແຜນການ ແລະ ການເງິນ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ.

**ມາດຕາ 9 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ**

ສະພາບໍລິຫານ ກປຟ ມີ ສິດ ແລະ ໜ້າທີ ດັ່ງນີ້:

1. ນໍາພາ, ຊີ້ນໍາ, ຊຸກຍູ້, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານ ຂອງກອງເລຂາ ກປຟ;
2. ພິຈາລະນາ ແລະ ຮັບຮອງ ແຜນການເຄື່ອນໄຫວ, ບົດລາຍງານ ແລະ ແຜນ ລາຍຮັບ-ລາຍຈ່າຍ ປະຈໍາປີ ຂອງ ກປຟ;
3. ພິຈາລະນາ ຮັບຮອງ ເອົາລະບຽບການ ຂອງ ກປຟ;
4. ແຕ່ງຕັ້ງ ຫຼື ປົດຕໍາແໜ່ງຂອງກອງເລຂາ ກປຟ;
5. ຕິດຕາມ ກວດກາ ແລະ ປະເມີນຜົນການນໍາໃຊ້ເງິນກອງທຶນ;
6. ຮັບຮອງບົດລາຍງານຜົນການກວດສອບດ້ານການເງິນຂອງກອງທຶນ;
7. ຕິດຕາມ ກວດກາ ຄຸ້ມຄອງການເຄື່ອນໄຫວ ແລະ ນໍາໃຊ້ ຕາມເປົ້າໝາຍ ແລະ ແຜນການ ໃຫ້ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;
8. ລະດົມແຫຼ່ງທຶນ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອປະກອບໃຫ້ ກປຟ;
9. ສະຫຼຸບ ແລະ ລາຍງານການເຄື່ອນໄຫວຂອງວຽກງານຂອງ ກປຟ ຕໍ່ລັດຖະບານເປັນຢ່າງປົກກະຕິ;
10. ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ ໃນລະບຽບການຂອງກອງທຶນ.

**ມາດຕາ 10 ກອງປະຊຸມສະພາບໍລິຫານ ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ**

ກອງປະຊຸມສະພາບໍລິຫານ ກປຟ ຈັດຂຶ້ນປີລະ ສອງ ເທື່ອ, ໃນກໍລະນີມີບັນຫາສໍາຄັນທີ່ຕ້ອງໄດ້ປຶກສາຫາລື ແລະ ພິຈາລະນາຕົກລົງດ່ວນ ກໍສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ ຕາມການຮຽກປະຊຸມຂອງປະທານສະພາບໍລິຫານ ຊຶ່ງມີສະມາຊິກສະພາບໍລິຫານ ເຂົ້າຮ່ວມແຕ່ ສອງສ່ວນສາມຂຶ້ນໄປ. ມະຕິກອງປະຊຸມສະພາບໍລິຫານຈະມີຜົນບັງຄັບໃຊ້ ກໍຕໍ່ເມື່ອໄດ້ຮັບການຮັບຮອງຈາກສຽງສ່ວນຫຼາຍ ຂອງສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ.

ໃນກໍລະນີ ປະທານສະພາບໍ່ຢູ່ ຫຼື ຕິດຂັດ ແມ່ນໃຫ້ຮອງປະທານສະພາ ຜູ້ທີ່ຖືກມອບໝາຍເປັນຜູ້ປະຕິບັດໜ້າທີ່ແທນ.

**ມາດຕາ 11 ກອງເລຂາ**

ກອງເລຂາກອງທຶນ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ວິຊາການຊ່ວຍວຽກຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍປະທານສະພາບໍລິຫານກອງທຶນ ຕາມການສະເໜີຂອງສະພາບໍລິຫານກອງທຶນ.

ຫົວໜ້າ ແລະ ຮອງຫົວໜ້າ ກອງເລຂາ ມີຕຳແໜ່ງບໍລິຫານ ດັ່ງນີ້:

1. ຫົວໜ້າກອງເລຂາກອງທຶນ ທຽບເທົ່າຕຳແໜ່ງບໍລິຫານ ປະເພດ 2;
2. ຮອງຫົວໜ້າກອງເລຂາກອງທຶນ ທຽບເທົ່າຕຳແໜ່ງບໍລິຫານ ປະເພດ 3;

**ມາດຕາ 12 ສິດ ແລະ ໜ້າທີ່ຂອງກອງເລຂາ**

ກອງເລຂາ ມີ ສິດ ແລະ ໜ້າທີ ດັ່ງນີ້:

1. ເປັນເສນາທິການ ໃຫ້ແກ່ສະພາບໍລິຫານກອງທຶນ ໃນການຄຸ້ມຄອງບໍລິຫານ ການເຄື່ອນໄຫວວຽກງານ ແລະ ບັນຊີ-ການເງິນ ຂອງກອງທຶນ;
2. ສ້າງ, ສັງລວມ ແລະ ສະເໜີແຜນການເຄື່ອນໄຫວນຳໃຊ້ກອງທຶນຕໍ່ສະພາບໍລິຫານກອງທຶນ ເພື່ອພິຈາລະນາ ແລະ ຮັບຮອງ;
3. ສ້າງ ລະບຽບການ, ຄຳແນະນຳ ກ່ຽວກັບ ການຄຸ້ມຄອງ, ບໍລິຫານ ແລະ ນຳໃຊ້ ກອງທຶນ;
4. ໂຄສະນາເຜີຍແຜ່ ກ່ຽວກັບຄວາມໝາຍຄວາມສຳຄັນ ແລະ ພາລະບົດບາດຂອງກອງທຶນ;
5. ຕິດຕາມ ກວດກາ ແລະ ປະເມີນຜົນໃນການນຳໃຊ້ກອງທຶນຂອງພາກສ່ວນຕ່າງໆ ທີ່ໄດ້ຮັບອະນຸມັດ;
6. ປະສານສົມທົບ ແລະ ຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ຕາມການຊີ້ນຳຂອງສະພາບໍລິຫານກອງທຶນ;
7. ພົວພັນຮ່ວມມືກັບອົງການຈັດຕັ້ງທີ່ກ່ຽວຂ້ອງທັງ ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງສະພາບໍລິຫານກອງທຶນ;
8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ຕໍ່ສະພາບໍລິຫານ ກປຟ ຢ່າງເປັນປົກກະຕິ;
9. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບການຂອງກອງທຶນ.

## ໝວດທີ 4
## ການເປີດບັນຊີ, ການກວດສອບ ແລະ ການລາຍງານ

**ມາດຕາ 13 ການເປີດບັນຊີ**

ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ ຕ້ອງມີລະບົບບັນຊີທີ່ຖືກຕ້ອງ ຕາມ ກົດໝາຍ ວ່າດ້ວຍການບັນຊີ ແລະ ສາມາດເປີດບັນຊີເງິນຝາກຢູ່ທະນາຄານທຸລະກິດ ທີ່ມີຄວາມໝັ້ນຄົງ ແລະ ເຊື່ອຖືໄດ້ ຢູ່ ສປປ ລາວ ຕາມການອະນຸມັດຂອງສະພາບໍລິຫານກອງທຶນ.

**ມາດຕາ 14 ການກວດສອບບັນຊີ**

ບັນຊີຂອງ ກປຟ ຕ້ອງມີການກວດສອບທຸກປີ ໂດຍອົງການກວດສອບແຫ່ງລັດ ຫຼື ຜູ້ກວດສອບອິດສະຫຼະ. ໃນກໍລະນີ ຫາກພົບເຫັນວ່າມີການກະທຳຜິດ ຕ້ອງຖືກດຳເນີນຄະດີ ຕາມ ກົດໝາຍ.

**ມາດຕາ 15 ການລາຍງານ**

ກອງເລຂາ ກປຟ ຕ້ອງເຮັດບົດລາຍງານ ປະຈຳໄຕມາດ, ຫົກເດືອນ ແລະ ປະຈຳປີ ກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ກອງທຶນ ລວມທັງແຫຼ່ງລາຍຮັບ-ລາຍຈ່າຍ ປະຈຳປີ. ບົດລາຍງານທຸກສະບັບຕ້ອງໄດ້ຮັບຮອງຈາກ ສະພາບໍລິຫານ ກປຟ ກ່ອນນຳສົ່ງ ລັດຖະບານ ແລະ ພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 16 ຕາປະທັບ**

ກອງທຶນປ້ອງກັນຄວາມປອດໄພທາງລົດໄຟ ມີຕາປະທັບເປັນຂອງຕົນເອງ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 17 ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການ ຈັດຕັ້ງ ຜັນຂະຫຍາຍ ດໍາລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ບັນດາ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 18 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 00 ເດືອນ 2023 ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**